# ຊົມເຊີຍ BCEL ໄດ້ຮັບລາງວັນທຸລະກິດອາຊຽນດີເດັ່ນ ປະຈຳປີ 2022

## (ASEAN Business Award 2022)




BCEL ໄດ້ເຂົ້າຮ່ວມຮັບລາງວັນໃນງານລ້ຽງມອບລາງວັນທຸລະກິດອາຊຽນດີເດັ່ນ ປະຈຳປີ 2022 (ASEAN Business Award 2022), ທີ່ ພະນົມເປນ, ປະເທດ ກຳປູເຈຍ ເຊິ່ງເປັນງານມອບລາງວັນໃນລະດັບພູມມິພາກອາຊຽນ BCEL ແມ່ນໄດ້ຖືກຄັດເລືອກຮັບລາງວັນປະເພດພິເສດ (Cambodia Special Award 2022) ດ້ານທຸລະກິດຂະແໜງການຜະລິດຕະພັນ ການບໍລິການນະວັດຕະກຳທີ່ເຮັດວຽກເພື່ອສົ່ງເສີມທາງດ້ານການເງິນ, ການໂອນເງິນຂ້າມປະເທດ ແລະ ສົ່ງເສີມການນຳໃຊ້ສະກຸນເງິນທ້ອງຖິ່ນ, ເຊິ່ງພິທີມອບຮັບລາງວັນດັ່ງກ່າວແມ່ນໄດ້ຈັດຂຶ້ນຄຽງຄູ່ກັບກອງປະຊຸມສຸດຍອດທຸລະກິດ ແລະ ລົງທຶນອາຊຽນ (ASEAN Business and Investment Summit 2022-ABIS) ເຊິ່ງໄດ້ຈັດຂຶ້ນໃນວັນທີ 09 ພະຈິກ 2022 ທີ່ ພະນົມເປນ, ປະເທດກຳປູເຈຍ ຜ່ານມານີ້.

BCEL ແມ່ນເປັນທຸລະກິດໜຶ່ງດຽວ ໃນ ສປປ ລາວ ທີ່ຄົບຖ້ວນຕາມເງື່ອນໄຂ ແລະ ມາດຕະຖານ ທີ່ທາງກອງເລຂາສະພາທີ່ປຶກສາທຸລະກິດອາຊຽນຂອງ ກໍາປູເຈຍ ວາງອອກພາຍໃຕ້ການຄົ້ນຄວ້າ ແລະ ຖືກສະເໜີຊື່ເພື່ອຄັດເລືອກເຂົ້າຮ່ວມຮັບລາງວັນດັ່ງກ່າວ ໂດຍສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດລາວ ໃນນາມສະພາທີ່ປຶກສາທຸລະກິດອາຊຽນ ຂອງ ສປປລາວ (ASEAN Business Advisory Council, Laos). ລາງວັນອັນມີຄຸນຄ່າໃນຄັ້ງນີ້ ໃນນາມ BCEL ຂຶ້ນຮັບລາງວັນໂດຍ ທ່ານ ມັນທະລາດ ແກ້ວປະເສີດ, ຮອງຜູ້ອໍານວຍການທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.




ພວກເຮົາຂໍຂອບໃຈເປັນຢ່າງສູງມາຍັງ ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດລາວ ພ້ອມດ້ວຍ ກອງເລຂາສະພາທີ່ປຶກສາທຸລະກິດ ຂອງ ກໍາປູເຈຍ (ASEAN Business Advisory Council) ທີ່ໄດ້ມອບລາງວັນອັນຊົງຄຸນຄ່ານີ້ໃຫ້ກັບ BCEL ແລະ ຂໍຂອບໃຈລູກຄ້າທຸກທ່ານທີ່ໃຫ້ການສະໜັບສະໜຸນ ຊົມໃຊ້ຜະລິດຕະພັນ ແລະ ການບໍລິການຕະຫຼອດມາ, ໃນຕໍ່ໜ້າ BCEL ຈະສືບຕໍ່ມຸ້ງໝັ້ນພັດທະນາລະບົບການບໍລິການທາງດ້ານການເງິນ ແລະ ລວມໄປເຖິງຜະລິດຕະພັນທາງການເງິນດິຈິຕ້ໍຢ່າງບໍ່ຢຸດຢັ້ງເພື່ອໃຫ້ແທດເໝາະກັບຄວາມຕ້ອງການຂອງລູກຄ້າຜູ້ໃຊ້ບໍລິການ ໂດຍທຸກຜະລິດຕະພັນ ແລະ ການບໍລິການແມ່ນເນັ້ນເຖິງຄວາມທັນສະໄໝ, ສະດວກສະບາຍ, ມີຄວາມປອດໄພ ສາມາດກວດສອບໄດ້ ແລະ ໄດ້ມາດຕະຖານສາກົນ ເພື່ອຕອບສະໜອງຄວາມຕ້ອງການລູກຄ້າບົນພື້ນຖານຄວາມຮັບຜິດຊອບສູງຕໍ່ສັງຄົມກໍຄືລູກຄ້າຜູ້ທີ່ໃຊ້ບໍລິການ.



ຮູບພາບ: ທ່ານ ມັນທະລາດ ແກ້ວປະເສີດ ຮອງຜູ້ອໍານວຍການ BCEL ຂຶ້ນຮັບລາງວັນ ທີ່ ພະນົມເປນ ປະເທດ ກໍາປູເຈຍ 09 ພະຈິກ 2022

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**ທັນສະໄໝ ວ່ອງໄວ ໝັ້ນໃຈ**